ແຫລ່ງຊ່ວຍເຫລືອອູ້ມຊູພໍ່ແມ່

ແຫລ່ງຊ່ວຍເຫລືອອູ້ມຊູພໍ່ແມ່ສາມາດເປັນເຄື່ອງມືເພື່ອຈະຊ່ວຍເຫລືອຄອບຄົວໄດ້.ແຫລ່ງຊ່ວຍເຫລືອເຫລົ່ານີ້ສາມາດເປັນຫົນທາງທີ່ດີຫລາຍທີ່ຈະພົບກັບພໍ່ແມ່ຄົນອື່ນໆ,ເຮັດໃຫ້ລູກຂອງທ່ານຫລິ້ນນຳເດັກນ້ອຍຄົນອື່ນ, ຮຽນຮູ້ຄວາມຊ່ຽວຊານໃຫມ່, ຫລືຕິດແຫດທ່ານນຳຜູ້ໃຫ້ການສຶກສາພໍ່ແມ່ຜູ້ທີ່ສາມາດຊ່ວຍທ່ານແກ້ໄຂຂຸບປະສັກຕ່າງໆ.

WithinReach ຮູ້ຈັກວ່າແຕ່ລະຄອບຄົວແມ່ນບໍ່ຄືກັນ. ພະນັກງານຂອງ WithinReach ຈະຍິນດີລໍຖ້າເວົ້ານຳທ່ານ ແລະ ເຮັດວຽກຮ່ວມກັນເພື່ອຈະຊອກຫາແຫລ່ງຊ່ວຍເຫລືອທີ່ເຫມາະສົມທີ່ສຸດສຳລັບຄອບຄົວຂອງທ່ານ.

WASHINGTON
WorkFirst

WithinReach™

Washington State Department of Social & Health Services
Transforming lives

DSHS 22-1780 LA (12/18) Laotian

ການບໍຣິການສຳລັບ ຄອບຄົວຈາກ WithinReach™

ການລ້ຽງລູກໃຫ້ໄດ້ດີທີ່ສຸດ

DSHS Region 2 WorkFirst
ໃນການປະສານງານຮ່ວມກັນນຳ
WithinReach™

Washington State Department of Social & Health Services
Transforming lives

WithinReach™

WithinReach ແມ່ນໃຜ?

WithinReach ເປັນອົງການບໍ່ຫາຜົນກຳໄຮທີ່ຊ່ວຍເຫລືອຄອບຄົວໃຫ້ຜ່ານຜ່າຣະບົບການບໍຣິການສຸຂະພາບ ແລະ ສັງຄົມທີ່ສັບສົນ. ທ່ານສາມາດຮຽນຮູ້ຜົ້ມເຕີມກ່ຽວກັບ WithinReach ໄດ້ທີ່ www.withinreachwa.org

WithinReach ເຮັດຫຍັງແດ່?

ພະນັກງານຂອງ WithinReach ຈະເຮັດວຽກນຳຄອບຄົວຂອງທ່ານເພື່ອຈະຊອກຫາແຫລ່ງຊ່ວຍເຫລືອການລ້ຽງລູກທີ່ຕອບສະນອງຄວາມຕ້ອງການຂອງທ່ານ. ສະວັດດີການບາງຢ່າງຂອງການເຮັດວຽກນຳ WithinReach:

- ການຕິດຕໍ່ສື່ສານທີ່ສະດວກນຳພະນັກງານ
- ທ່ານຊໍ້ບອກສິ່ງທີ່ສຳຄັນກວ່າຫມູ່ຂອງທ່ານ
- ພະນັກງານໃຊ້ເວລາເພື່ອຈະເຂົ້າໃຈຄວາມຕ້ອງການສ່ວນບຸກຄົນ
- ການຊອກຫາແຫລ່ງຊ່ວຍເຫລືອທີ່ຖືກເຮັດອອກມາອີງຕາມສະຖານທີ່ ແລະ ຄວາມຕ້ອງການດ້ານການວິນສິ່ງໄປມາ
- ພະນັກງານມີຄວາມຮັບຮູ້ທຸກຢ່າງກ່ຽວກັບເງື່ອນໄຂຮັບເອົາ ແລະ ກົດກຳນົດຂອງການຈົດຊື່
- ການສິ່ງຕໍ່ໄດ້ຖືກອີງໃສ່ຄວາມຕ້ອງການຂອງທ່ານ
- ບ່ອນເກັບກຳແຫລ່ງຊ່ວຍເຫລືອໄດ້ຖືກດັດແປງໃຫມ່ເປັນປະຈຳ

ແຫລ່ງຊ່ວຍເຫລືອແນວໃດແດ່ທີ່ມີໄວ້ໃຫ້?

ແຫລ່ງຊ່ວຍເຫລືອອູ້ມຊູພໍ່ແມ່ແຕກຕ່າງກັນໄປອີງຕາມຄວາມຕ້ອງການຂອງຄອບຄົວຂອງທ່ານ. WithinReach ມີແຫລ່ງຊ່ວຍເຫລືອສຳລັບຜູ້ຍິງຖືພາຕັ້ງທ້ອງ ແລະ ພໍ່ແມ່ຂອງລູກຜູ້ນ້ອຍ. ພະນັກງານຈະເຮັດດີທີ່ສຸດທີ່ເວົາເຈົ້າເຮັດໄດ້ເພື່ອຈະຊອກຫາແຫລ່ງຊ່ວຍເຫລືອທີ່ຕອບສະນອງສິ່ງສຳຄັນກວ່າຫມູ່ຂອງທ່ານ. ແຫລ່ງຊ່ວຍເຫລືອທີ່ມີໄວ້ໃຫ້ສາມາດແຕກຕ່າງກັນໄປອີງຕາມສະພາບການບ່ອນຢູ່ອາສັຍຂອງທ່ານ, ຊົນໄລຍະ ແລະ ອາຍຸຂອງລູກ ຂອງທ່ານ.

ຕົວຢ່າງຂອງແຫລ່ງຊ່ວຍເຫລືອອູ້ມຊູພໍ່ແມ່:
ຫ້ອງຮຽນເຣື່ອງການຄອດລູກ
ຫ້ອງຮຽນເຣື່ອງການສຶກສາສຳລັບພໍ່ແມ່
ກຸ່ມຫລິ້ນ ແລະ ຮຽນຮູ້
ການຖືພາ ແລະ ອຸບປະກອນສຳລັບເດັກນ້ອຍ
ການບໍຣິການ Doula
ໂຄງການອູ້ມຊູພໍ່ແມ່ຢູ່ໃນເຮືອນ: ໂຄງການ Early Head Start, Parents as Teachers, Nurse Family Partnership, Open Arms Outreach Doula Program, ອື່ນໆ..
ກຸ່ມອູ້ມຊູພໍ່ແມ່ກຸ່ມໃຫມ່
ໂຄງການ Head Start/ECEAP

ທ່ານສາມາດຄາດຫມາຍແນວໃດແດ່?

1. ພະນັກງານຂອງ WorkFirst ຈະສິ່ງໃບສິ່ງຕໍ່ໄປຫາ WithinReach ໃຫ້ທ່ານ
2. WithinReach ຈະຄົ້ນຄົ້ວຫາໂຄງການຢູ່ໃນເຂດຂອງທ່ານ
3. WithinReach ຈະໂທຫາ, ເທັກສ້ຫາ ຫລື ສິ່ງອີເມລ້ຫາທ່ານ
   - ພະນັກງານຈະທຳຄວາມພະຍາຍາມສອງສາມເທື່ອເພື່ອຈະຕິດຕໍ່ຫາຄອບຄົວຂອງທ່ານ
   - ເວົາເຈົ້າຈະສັ່ງຄວາມໄວ້ຖ້າຫາກว่าເວົາເຈົ້າບໍ່ສາມາດຕິດຕໍ່ຫາ ທ່ານໄດ້
4. WithinReach ຈະຟັງຄວາມຂ້ອງໃຈ ແລະ ສິ່ງທີ່ສຳຄັນກວ່າຫມູ່ຂອງທ່ານ
5. WithinReach ຈະສົມທຽບທ່ານໃສ່ແຫລ່ງຊ່ວຍເຫລືອທີ່ເຫມາະສົມກັບຄວາມຕ້ອງການຂອງທ່ານທີ່ດີທີ່ສຸດ
6. WithinReach ຈະເອົາໃຫ້ທ່ານລາຍຊື່ຂອງແຫລ່ງຊ່ວຍເຫລືອທີ່ໄດ້ເວົ້າລົມກັນ
7. WithinReach ຈະທຳການຕິດແຫດນຳແຫລ່ງຊ່ວຍເຫລືອ/ໂຄງການຂອງຊຸມນຸມຊົນເມື່ອເວລາສາມາດເຮັດໄດ້

www.withinreachwa.org